ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

## ທ່ານ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຕ້ອນຮັບ ຄະນະຜູ້ອຳນວຍການ ທະນາຄານ ກະສິກອນໄທ ສຳນັກງານໃຫຍ່ຈາກປະເທດໄທ



ໃນວັນທີ 5 ພະຈິກ 2024, ທ່ານ ສຸລິສັກ ທຳມຸວົງ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ (ທຫລ) ພ້ອມດ້ວຍຄະນະກົມພາຍໃນ ທຫລ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ສຸວັດ ເຕຊະວັດທະນະວັນນາ, ຮອງຜູ້ອຳນວຍການໃຫຍ່ ທະນາຄານ ກະສິກອນໄທ ສຳນັກງານໃຫຍ່ ຈາກປະເທດໄທ ພ້ອມດ້ວຍຄະນະ, ຈຸດປະສົງຂອງການເຂົ້າຢ້ຽມຂໍ່ານັບໃນຄັ້ງນີ້ ແມ່ນເພື່ອປຶກສາຫາລືແລກປ່ຽນຄຳເຫັນກ່ຽວກັບ ເສດຖະກິດ-ການເງິນ ຂອງ ສປປ ລາວ ແຕ່ນີ້ຮອດທ້າຍປີ 2024 ພ້ອມທັງ ທິດທາງການດຳເນີນນະໂຍບາຍເງິນຕາຂອງ ທຫລ ແລະ ທ່າອ່ຽງເສດຖະກິດ-ການເງິນຂອງ ສປປ ລາວ ໃນປີ 2025.

ໃນໂອກາດນີ້, ທ່ານ ຮອງຜູ້ວ່າການ ທຫລ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຂອບໃຈຕໍ່ທ່ານ ຮອງຜູ້ອຳນວຍການໃຫຍ່ ທະນາຄານ ກະສິກອນໄທ ທີ່ໄດ້ເຂົ້າຢ້ຽມຂໍ່ານັບ ແລະ ແລກປ່ຽນຄຳເຫັນ ພ້ອມທັງໄດ້ສອບຖາມກ່ຽວກັບແຜນການເຄື່ອນໄຫວຕ່າງໆຂອງທະນະຄານ ເປັນຕົ້ນແມ່ນ ແຜນການດຳເນີນທຸລະກິດຢູ່ ສປປ ລາວ ໃນຊຸມປີຕໍ່ໜ້າ ການເຂົ້າຮ່ວມໂຄງການຊຳລະຂ້າມແດນລະຫວ່າງ ລາວ - ໄທ (Cross-Border QR Code Payment) ລວມທັງແຜນການເຂົ້າຮ່ວມລົງທຶນເພື່ອຖືຮຸ້ນໃນ ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ.

ຂ່າວ-ພາບ: ທະນາຄານແຫ່ງ ສປປ ລາວ

*ຢູ່ເມືອງລາວໃຊ້ເງິນກີບລາວ*